## II. ສະພາບການຊື້-ຂາຍຮຸ້ນ ປະຈຳເດືອນ ພະຈິກ ປີ 2016.

### 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ ທຽບໃສ່ເດືອນທີ່ຜ່ານມາ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 4,47%, S&P500 2,66% ແລະ NASDAQ 2,12% . ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ລົງທຶນຕ່າງພາກັນປະເມີນຜົນປະໂຫຍດຂອງບາງກຸ່ມທຸລະກິດທີ່ອາດຈະໄດ້ຮັບຜົນປະໂຫຍດຈາກການທີ່ ທ່ານ ໂດນັ້ນທຳ ໄດ້ຮັບການເລືອກຕັ້ງ ເປັນປະທານາທິບໍດີ ສ.ອາເມລິກາ ຄົນໃໝ່ ໂດຍສະເພາະຄວາມເຊື່ອຜູ້ລົງທຶນທີ່ມີຄວາມເຊື່ອໝັ້ນຕໍ່ກັບນະໂຍບາຍ Trumponomics ຂອງ ທ່ານ ໂດນັ້ນທຳ ວ່າຈະສົ່ງເສີມການລົງທຶນພາຍໃນປະເທດ ຈາກການຫຼຸດອາກອນລາຍໄດ້ ແລະ ຫຼຸດເງື່ອນໄຂຄວາມຫຍຸ້ງຍາກໃຫ້ກັບພາກທະນາຄານ ໄດ້ສົ່ງຜົນໃຫ້ຮຸ້ນກຸ່ມທະນາຄານຕ່າງພາກັນປັບຕົວເພີ່ມຂຶ້ນຢ່າງຄຶກຄັກ ໂດຍ ດັດ ຊະນີກຸ່ມທະນາຄານ ຂອງ NASDAQ Bank ແມ່ນສາມາດປັບຕົວເພີ່ມຂຶ້ນສູງເຖິງ 17,77% ເມື່ອທຽບກັບເດືອນທີ່ຜ່ານມາ ແລະ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ໄດ້ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາ ປັບຕົວເພີ່ມຂຶ້ນ ເມື່ອທຽບກັບເດືອນທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ຝຣັ່ງ (CAC40) ປັບຕົວຫຼຸດລົງ -0,14%, ດັດຊະນີ ເອີຣົບ (Eurofirst 300) -1,22%, ອັງກິດ (FTSE100) -3,45% ແລະ ເຢຍລະມັນ (DAX) -0,24% ຍົກເວັ້ນ ຕະຫຼາດຫຼັກຊັບ ລຸກຊຳບວກ (LUXXX) ປັບຕົວເພີ່ມຂຶ້ນ 0,69%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບປັບຕົວຫຼຸດລົງ ແມ່ນເນື່ອງຈາກ ຜູ້ລົງທຶນເລີ່ມກັງວົນຕໍ່ກັບສະຖານະການການເມືອງຂອງ ສ.ອາເມລິກາ ໂດຍສະເພາະສະເພາະສະຖານະການການເມືອງຂອງ ສ.ອາເມລິກາ ໂດຍສາເຫດແມ່ນມາຈາກຄວາມກັງວົນຂອງຜູ້ລົງທຶນຕໍ່ກັບທ່າທີຂອງ ວ່າທີ່ປະທານາທິບໍດີ ສ.ອາເມລິກາ ທີ່ມີຕໍ່ກັບຄວາມສຳພັນ ແລະ ການຄ້າກັບເອີຣົບ ປະກອບກັບ ການເປີດເຜີຍຂໍ້ມູນ GDP ໄຕມາດ 3 ຂອງປະເທດ ຝຣັ່ງ ປັບຕົວເພີ່ມຂຶ້ນພຽງ 0,2% ເມື່ອທຽບກັບໄຕມາດກ່ອນ ເຊິ່ງໜ້ອຍກວ່າການຄາດການຂອງນັກເສດຖະສາດ ເຊິ່ງການປັບຕົວເພີ່ມຂຶ້ນໜ້ອຍກວ່າຄາດການນີ້ ແມ່ນມີຜົນມາຈາກການປັບຕົວຫຼຸດລົງຂອງ ພາກການທ່ອງທ່ຽວເຊິ່ງໄດ້ຮັບຜົນກະທົບຈາກບັນຫາການກໍ່ການຮ້າຍທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຕະຫຼາດຫຼັກຊັບ ອິນໂດເນເຊຍ (JCI) ປັບຕົວຫຼຸດລົງ -4,82%, ໄທ (SET) -1,47%, ມາເລເຊຍ (FBMLCI) -2,56%, ອົດສະຕາລີ (S&P/ASX200) -1,45%, ສສ. ຫວຽດນາມ (HOCHIMIN) -1,54%, ໄຕ້ຫວັນ (TWSE) -2,85%, ສສ. ຫວຽດນາມ (HANOI) -4,10% ແລະ ມຽນມ້າ (MYANPIX) -2,88%, ດັດຊະນີອາຊຽນ (ASEAN 40) -5,61%,ຮ່ອງກົງ (HANG SENG) -4,35%, ສ.ເກົາຫຼີ (KOSPI) -3,29%, ຟີລິບປິນ (PCOMP) -8,77% ແລະ ສິງກະໂປ (STRAIT TIMES) -0,51%, ຍົກເວັ້ນ ຕະຫຼາດຫຼັກຊັບ ສປ.ຈີນ (SHENZHEN) ປັບຕົວເພີ່ມຂຶ້ນ 3,23%, ສປ.ຈີນ (SHANGHAI) 4,12%, ຍີ່ປຸ່ນ (NIKKEI225) 5,36% ແລະ ກຳປູເຈຍ (CSX) ແມ່ນບໍ່ປ່ຽນແປງເມື່ອທຽບກັບເດືອນກ່ອນ. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ສ່ວນໃຫຍ່ປັບຕົວຫຼຸດລົງແມ່ນເນື່ອງຈາກ ພາຍຫຼັງຈາກການປະກາດຜົນການເລືອກຕັ້ງ ໂດຍທ່ານ ໂດນັ້ນທຳ ໄດ້ຮັບໄຊຊະນະໃນການເລືອກຕັ້ງ ໄດ້ສົ່ງຜົນໃຫ້ຕະຫຼາດຫຼັກຊັບໃນອາຊີຕ່າງພາກັນປັບຕົວຫຼຸດລົງຢ່າງຕໍ່ເນື່ອງ ສືບເນື່ອງຈາກຜູ້ລົງທຶນມີຄວາມກັງວົນຕໍ່ການດຳເນີນນະໂຍບາຍການຕ່າງປະເທດ ແລະ ການຄ້າລະຫວ່າງປະເທດທີ່ຕິດພັນກັບອາຊີ ທີ່ມີຄວາມສ່ຽງທີ່ວ່າ ທ່ານ ໂດນັ້ນທຳ ອາດຈະປັບປ່ຽນນະໂຍບາຍທີ່ຕິດພັນດັ່ງກ່າວ ເຊິ່ງຈະສົ່ງຜົນເສຍໃຫ້ແກ່ບັນດາປະເທດໃນ ອາຊີ ໃນອານາຄົດ ແລະ ຜູ້ລົງທຶນຍັງມີຄວາມກັງວົນຕໍ່ກັບ ຂໍ້ສັນຍາເຂດການຄ້າ ເສລີ Trans-Pacific Partnership ຫຼື TPP ເຊິ່ງເປັນຂໍ້ສັນຍາເຂດການຄ້າເສລີທີ່ໃຫຍ່ທີ່ສຸດ ອາດຈະໄດ້ຮັບຜົນກະທົບຈາກການ ທີ່ວ່າທີ່ຜູ້ນຳຄົນໃໝ່ຂອງ ສ.ອາເມລິກາ ມີທ່າທີບໍ່ເຫັນດີກັບໂຄງການຄວາມຮ່ວມມືນີ້ ແລະ ອາດສົ່ງຜົນໃຫ້ໂຄງການດັ່ງກ່າວຢຸດສະງັດໄດ້

## 2. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ປິດຢູ່ທີ່ 1.015,48 ຈຸດ ເພີ່ມຂຶ້ນ 1,4% ເມື່ອທຽບໃສ່ເດືອນຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 9.506.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 47,27 ຕື້ກີບ ເພີ່ມຂຶ້ນ 1.880,04% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 63,40% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.133 ກີບ ເພີ່ມຂຶ້ນ 282 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 44.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 227,92 ລ້ານກີບ ຫຼຸດລົງ 47,69% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 31.96% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,40%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.972 ກີບ ເພີ່ມຂຶ້ນ 105 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 9.458.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 47,02 ຕື້ກີບ ເພີ່ມຂຶ້ນ 2.322,11% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 63,45% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,38%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.100 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.000 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 12,20 ລ້ານກີບ ເພີ່ມຂຶ້ນ 1.900% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ຜູ້ລົງທຶນຕ່າງປະເທດ ບໍ່ສາມາດຈັບຄູ່ຊື້-ຂາຍຮຸ້ນ LWPC ໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.500 ກີບ ຫຼຸດລົງ 5 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,5 ລ້ານກີບ ຫຼຸດລົງ 63,24% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.100 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,60 ລ້ານກີບ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ.. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

**ຮັກສາການຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

---

[1] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[3] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

## ຕາຕະລາງ 1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

## ແຜນວາດ 1: ດັດຊະນີຕະຫຼາດຫຼັກຊັບລາວ

| | ເດືອນ ຕຸລາ | | | ເດືອນ ພະຈິກ | | | % ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ(ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ | ຈຳນວນ(ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ | ຈຳນວນ | ມູນຄ່າການຊື້ຂາຍ | ລາຄາສະເລຍ |
| BCEL | 89.800 | 435.670.000 | 4.852 | 44.400 | 227.920.000 | 5.133 | - 50,56 | - 47,69 | 282 |
| EDL-Gen | 398.900 | 1.941.510.000 | 4.867 | 9.458.600 | 47.025.425.000 | 4.972 | 2.271,17 | 2.322,11 | 105 |
| LWPC | 100 | 610.000 | 6.100 | 2.000 | 12.200.000 | 6.100 | 1.900 | 1.900 | - |
| PTL | 3.800 | 9.520.000 | 2.505 | 1.400 | 3500.000 | 2.500 | - 63,16 | - 63,24 | - 5 |
| SVN | 0 | 0 | 0 | 200 | 600.000 | 3.100 | 0 | 0 | 0 |
| ທັງໝົດ | 492.600 | 2.387.310.000 | | 9.506.600 | 47.269.645.000 | | 1.829,88 | 1.880,04 | |

(11 ມັງກອນ 2011 – 22 ພະຈິກ 2016)




## ແຜນວາດ 2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

(24 ຕຸລາ – 21 ພະຈິກ 2016) ຫົວໜ່ວຍ: ລ້ານ ກີບ




**ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ**

| ຊື່ດັດສະນີ | ປະເທດ | ດັດຊະນີໃນເດືອນນີ້ | ດັດຊະນີໃນເດືອນກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 18.956,69 | 18.145,71 | 810,98 | 4,47 |
| NASDAQ | ສ.ອາເມລິກາ | 5.368,86 | 5.257,40 | 111,46 | 2,12 |
| S&P500 | ສ.ອາເມລິກາ | 2.198,18 | 2.141,16 | 57,02 | 2,66 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.342,44 | 1.359,03 | -16,59 | -1,22 |
| DAX | ເຢຍລະມັນ | 10.685,13 | 10.710,73 | -25,6 | -0,24 |
| FTSE100 | ອັງກິດ | 6.777,96 | 7.020,47 | -242,51 | -3,45 |
| CAC40 | ຝຣັ່ງ | 4.529,58 | 4.536,07 | -6,49 | -0,14 |
| LUXXX | ລຸກຊໍາບວກ | 1.603,714 | 1.592,649 | 11,065 | 0,69 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 18.106,02 | 17.184,59 | 921,43 | 5,36 |
| KOSPI | ສ.ເກົາຫຼີ | 1.966,05 | 2.033,00 | -66,95 | -3,29 |
| HANGSHENG | ຮ່ອງກົງ | 22.357,78 | 23.374,40 | -1.016,6 | -4,35 |
| TWSE | ໄຕ້ຫວັນ | 9.041,11 | 9.306,57 | -265,46 | -2,85 |
| SHANGHAI | ສປ. ຈີນ | 3.218,15 | 3.090,94 | 127,21 | 4,12 |
| SHENZHEN | ສປ. ຈີນ | 2.118,944 | 2.052,56 | 66,383 | 3,23 |
| S&P/ASX200 | ອົດສະຕາລີ | 5.351,30 | 5.430,30 | -79 | -1,45 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8.730,18 | 9.249,04 | -518,86 | -5,61 |

| | | | | | |
|---|---|---|---|---|---|
| STRAIT TIME | ສິງກະໂປ | 2.816,67 | 2.831,06 | -14,39 | -0,51 |
| SET | ໄທ | 1.478,30 | 1.500,37 | -22,07 | -1,47 |
| FBMLCI | ມາເລເຊຍ | 1.627,28 | 1.669,98 | -42,7 | -2,56 |
| JCI | ອິນໂດເນເຊຍ | 5.148,32 | 5.409,24 | -260,92 | -4,82 |
| PCOMP | ຟີລິບປິນ | 6.979,06 | 7.650,22 | -671,16 | -8,77 |
| HOCHIMIN | ສສ. ຫວຽດນາມ | 674,29 | 684,83 | -10,54 | -1,54 |
| HANOI | ສສ. ຫວຽດນາມ | 80,75 | 84,2 | -3,45 | -4,10 |
| CSX | ກຳປູເຈຍ | 329,95 | 329,95 | 0 | 0,00 |
| LSX | ສປປ. ລາວ | 999,12 | 1.001,4 | -2,28 | -0,23 |
| MYANPIX | ມຽນມ້າ | 635,9 | 654,73 | -18,83 | -2,88 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3.561,13 | 3.023,92 | 537,21 | 17,77 |
| SET BANK | ໄທ | 476,65 | 483,96 | -7,31 | -1,51 |